**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ເລກທີ: 02 /ສພຫ.ທຄຕລ

ນະຄອນຫຼວງວຽງຈັນ, ວັນທີ: 18/02/2021

# ມະຕິ

## ກອງປະຊຸມສະພາບໍລິຫານ ທຄຕລ ສະໄຫມວິສາມັນ

## ວັນທີ 18/02/2021

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນຄັ້ງທີ 1 ປະຈໍາປີ 2021 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00 ໂມງ ວັນທີ 18/02/2021 ທີ່ ສໍານັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມ ຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງບາງບັນຫາສໍາຄັນ ດັ່ງນີ້:**

1. ກອງປະຊຸມ ໄດ້ໃຫ້ທິດຊີ້ນໍາ ກ່ຽວກັບ ການຄຸ້ມຄອງຕິດຕາມລູກຄ້າສິນເຊື່ອລາຍໃຫຍ່ຂອງ ທຄຕລ, ລູກຄ້າສິນເຊື່ອທີ່ລົງທຶນກ່ຽວກັບໂຄງການກໍ່ສ້າງເຂື່ອນໄຟຟ້າ, ລູກຄ້າສິນເຊື່ອຂອງ ທຄຕລ ທີ່ໄດ້ຮັບຜົນກະທົບຈາກພະຍາດລະບາດ COVID-19 ແລະ ທິດທາງການແກ້ໄຂໃນໄລຍະຍາວ;
2. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງການອະນຸມັດສິນເຊື່ອໃຫ້ແກ່ລູກຄ້າລາຍໃຫຍ່ຈໍານວນ 1 ລາຍການ.
3. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງການຄັດເລືອກບໍລິສັດກວດສອບພາຍນອກ ເພື່ອນໍາສະເໜີກອງປະຊຸມຜູ້ຖືຮຸ້ນປະຈໍາປີ 2020 ແຕ່ງຕັ້ງເປັນຜູ້ກວດສອບອິດສະລະຂອງ ທຄຕລ ປະຈໍາປີ 2021;

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ບຸນເຫຼືອ ສິນໄຊວໍຣະວົງ